ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ 188 /ນຍ**

**ນະຄອນຫຼວງວຽງຈັນ, ວັນທີ 17.08.2006**

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການຕົກລົງຮັບຮອງ ຂອງ ກອງປະຊຸມສະໄໝສາມັນ ຂອງ ສະພາແຫ່ງຊາດຊຸດທີ VI;
- ອີງຕາມໃບສະເໜີ ຂອງ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0938/ອຄ, ລົງວັນທີ 26 ກໍລະກົດ 2006 ແລະ ໃບສະເໜີ ຂອງ ຫົວໜ້າຫະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 102/ຫປຄ.ກພລ, ລົງວັນທີ 07 ສິງຫາ 2006.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**
**ອອກດຳລັດ:**

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ເພື່ອເປັນບ່ອນອີງໃນດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ແນໃສ່ຈັດຕັ້ງປະຕິບັດນະໂຍບາຍ

ຂອງພັກ ແລະ ລັດຖະບານ ກ່ຽວກັບ ການຊຸກຍູ້, ສົ່ງເສີມ ແລະ ພັດທະນາຂົງເຂດອຸດສາຫະກຳ ແລະ ການຄ້າຂອງປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

**ກະຊວງອຸດສາຫະກຳ ແລະ ການຄ້າ** ຊຶ່ງຂຽນຫຍໍ້ດ້ວຍຕົວອັກສອນລາວວ່າ: **"ອຄ"** ແມ່ນອົງການບໍລິຫານລັດຂັ້ນສູນກາງ ໃນໂຄງປະກອບກົງຈັກ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງລັດ ຕໍ່ ຂົງເຂດອຸດສາຫະກຳ ແລະ ການຄ້າ ໃນ ຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ດັ່ງນີ້:

3.1 ຄົ້ນຄ້ວາຮ່າງນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນກຳນົດລວມ, ກົດໝາຍ, ລັດຖະ ບັນຍັດ, ລັດຖະດຳລັດ, ດຳລັດ, ກຳນົດມາດຕະຖານ, ກຳນົດໝາຍເຕັກນິກ ແລະ ລະບຽບການ ອື່ນໆ ກ່ຽວກັບວຽກງານຂອງຂະແໜງການອຸດສາຫະກຳແລະການຄ້າ ເພື່ອສະເໜີຕໍ່ລັດຖະບານ.

3.2 ຄົ້ນຄວ້າຫັນເອົານະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ ແລະ ມະຕິຕົກລົງຂອງລັດຖະ ບານ ກ່ຽວກັບວຽກງານອຸດສາຫະກຳ ແລະ ການຄ້າ ມາເປັນແຜນການ, ແຜນງານ ແລະ ໂຄງ ການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ.

3.3 ຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມການຜະລິດອຸດສາຫະກຳ ແລະ ການຄ້າ ດ້ວຍມາດຕະການຕ່າງໆຕາມລະບຽບກົດໝາຍກຳນົດ.

3.4 ຄຸ້ມຄອງສິ່ງແວດລ້ອມໂຮງງານອຸດສາຫະກຳ.

3.5 ພົວພັນ, ຮ່ວມມືດ້ານອຸດສາຫະກຳ ແລະ ການຄ້າກັບຕ່າງປະເທດ, ເຊື່ອມໂຍງເສດຖະກິດກັບ ພາກພື້ນ ແລະ ສາກົນ, ປະຕິບັດວຽກງານລັດຖະມົນຕີເສດຖະກິດອາຊຽນ, ວຽກງານເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນ ແລະ ວຽກງານກ່ຽວກັບອົງການການຄ້າໂລກ.

3.6 ຄົ້ນຄວ້າ, ຮ່ວມມືທາງດ້ານວິທະຍາສາດເຕັກນິກ-ວິຊາການ ແລະ ລະດົມການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ.

3.7 ຄຸ້ມຄອງ, ອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່, ການຄ້າ ຊາຍແດນ ແລະ ການຄ້າຜ່ານແດນ.

3.8 ພັດທະນາຕະຫຼາດ, ຄຸ້ມຄອງສິນຄ້າ ແລະ ລາຄາ.

3.9 ຄຸ້ມຄອງ, ພັດທະນາ ແລະ ສົ່ງເສີມຫົວໜ່ວຍທຸລະກິດ, ຝຶກອົບຮົມຍົກລະດັບສີມືແຮງງານ, ພັດ ທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

3.10 ຊຸກຍູ້, ສົ່ງເສີມ ແລະ ປົກປ້ອງການຜະລິດ ແລະ ຜູ້ຊົມໃຊ້ພາຍໃນ.

3.11 ສົ່ງເສີມການຄ້າ ແລະ ການສົ່ງອອກສິນຄ້າ.

3.12 ກໍ່ສ້າງ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນ ແລະ ປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

3.13 ຈັດຕັ້ງແນະນຳ, ກວດກາບັນດາອົງການ, ຂະແໜງການ, ທ້ອງຖິ່ນ ແລະ ຫົວໜ່ວຍຮາກຖານໃນການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ມາດຕະຖານ, ກຳນົດໝາຍເຕັກນິກໃນຂະແໜງ ອຸດສາຫະກຳ ແລະ ການຄ້າ.

3.14 ຄຸ້ມຄອງບໍລິຫານງົບປະມານ ແລະ ຊັບສິນບັດຂອງກະຊວງ.

3.15 ຊີ້ນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການທີ່ປຶກສາເສດຖະກິດການຄ້າ ທີ່ປະຈຳຢູ່ຕ່າງປະເທດ ແລະ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການ ອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ໂດຍປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ.

3.16 ຕິດຕາມ ແລະ ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານ ຂອງ ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອລາຍງານໃຫ້ລັດຖະບານ.

3.17 ຊີ້ນຳດ້ານມະຫາພາກ ຕໍ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ບັນດາວິສາຫະກິດ ຂອງລັດ ທີ່ຂຶ້ນກັບ ກະຊວງ ອ.ຄ.

3.18 ປະຕິບັດໜ້າທີ່ອື່ນໆ ຕາມທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

**ມາດຕາ 4. ຂອບເຂດສິດ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດດັ່ງນີ້:

4.1 ສະເໜີປັບປຸງແກ້ໄຂ, ສ້າງ ຫຼື ຍົກເລີກບັນດາກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ ກ່ຽວກັບວຽກງານຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕໍ່ລັດຖະບານ.

4.2 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງບໍລິຫານລັດໃນຂະແໜງອຸດສາຫະກຳ ແລະ ການຄ້າ.

4.3 ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງອົງການຈັດຕັ້ງຂັ້ນລຸ່ມ ທີ່ຂຶ້ນກັບຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ສະເໜີລັດຖະບານດັດແປງ, ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການອື່ນ ຫຼື ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບຫຼັກການຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຫຼື ຂັດກັບລະບຽບກົດໝາຍ ທີ່ປະກາດໃຊ້ແລ້ວ.

4.4 ເຊັນສັນຍາ ແລະ ອະນຸສັນຍາກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານອຸດສາຫະກຳ ແລະ ການຄ້າ ຕາມການມອບໝາຍ ຂອງ ລັດຖະບານ.

4.5 ສະເໜີລັດຖະບານພິຈາລະນາກ່ຽວກັບມາດຕະການປ້ອງກັນ ແລະ ຕອບໂຕ້ທາງການຄ້າ ເພື່ອ ຜົນປະໂຫຍດຂອງປະເທດ.

4.6 ຂຶ້ນ ຫຼື ລຶບລ້າງທະບຽນວິສາຫະກິດ ແລະ ອອກ ຫຼື ຖອນໃບອະນຸຍາດ, ໃບຮັບຮອງ ຫຼື ໃບຢັ້ງຢືນຕ່າງໆ ຕາມລະບຽບກົດໝາຍກຳນົດ.

4.7 ກວດກາການຄ້າ ຕາມລະບຽບການສະເພາະ.

4.8 ພິຈາລະນາບັນຫາທີ່ເປັນຂໍ້ຂັດແຍ່ງ ກ່ຽວຂ້ອງກັບວຽກງານຂະແໜງອຸດສາຫະກຳ ແລະ ການຄ້າ ພ້ອມທັງໃຫ້ຄຳປຶກສາທາງດ້ານນະໂຍບາຍ, ວິຊາການ ແລະ ກົດໝາຍ ແກ່ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

4.9 ພິຈາລະນາກວດຜ່ານ, ເຊັນຮັບຮອງ, ເຊັນຢັ້ງຢືນຄວາມຖືກຕ້ອງ ໃນດ້ານວິຊາການ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ຕໍ່ ບົດວິພາກເສດຖະກິດເຕັກນິກ ຫຼື ຕໍ່ການຄົ້ນຄວ້າອະນຸມັດລົງທຶນພາຍໃນ ຫຼື ຕ່າງປະເທດ.

4.10 ສະເໜີລັດຖະບານ ໃຫ້ລາງວັນແກ່ການຈັດຕັ້ງ ຫຼື ບຸກຄົນທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາອຸດສາຫະກຳ ແລະ ການຄ້າ.

4.11 ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລາກອນ ຂັ້ນຮອງຫົວໜ້າກົມ ແລະ ທຽບເທົ່າລົງມາຕາມກົດໝາຍກຳນົດ.

4.12 ສະເໜີແຕ່ງຕັ້ງ ຫຼື ຖອນຜູ້ຕາງໜ້າຫ້ອງການທີ່ປຶກສາເສດຖະກິດການຄ້າທີ່ປະຈຳຢູ່ຕ່າງປະເທດ.

4.13 ວາງມາດຕະການອັນຈຳເປັນ ເພື່ອປະຕິບັດແຜນການປະຈຳປີຂອງຕົນ.

4.14 ປະຕິບັດສິດອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

**ກ. ໂຄງປະກອບກົງຈັກ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ປະກອບດ້ວຍ:**

- ຫ້ອງການ.
- ກົມ ຈັດຕັ້ງ ແລະ ພະນັກງານ.
- ກົມ ກວດກາ.
- ກົມ ອຸດສາຫະກຳ.
- ກົມ ການຄ້າພາຍໃນ.
- ກົມ ນະໂຍບາຍການຄ້າຕ່າງປະເທດ.
- ກົມ ການນຳເຂົ້າ ແລະ ສົ່ງອອກ.

- ກົມ ສົ່ງເສີມການຜະລິດ ແລະ ການຄ້າ.
- ສະຖາບັນ ຄົ້ນຄວ້າເສດຖະກິດການຄ້າ.

ນອກຈາກໂຄງປະກອບກົງຈັກດັ່ງກ່າວນີ້, ກະຊວງອຸດສາຫະກຳ ແລະ ການຄ້າ ຍັງຊີ້ນຳ ແລະ ຄຸ້ມຄອງ ຫ້ອງການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ ອົງການຜະລິດຕະພາບແຫ່ງຊາດ ຕື່ມອີກຕາມການມອບໝາຍ ຂອງລັດຖະບານ.

**ຂ. ຂັ້ນທ້ອງຖິ່ນ**

ກົງຈັກການຈັດຕັ້ງ ຂັ້ນທ້ອງຖິ່ນ, ຢູ່ໃຕ້ການຄຸ້ມຄອງໃນດ້ານວິຊາການ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ປະກອບມີ:

- ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ.
- ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ (ຖ້າຈຳເປັນ).

**ຄ. ຢູ່ຕ່າງປະເທດ**

ມີ ຫ້ອງການທີ່ປຶກສາເສດຖະກິດການຄ້າລາວ ປະຈຳຢູ່ບາງປະເທດ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

6.1 ກະຊວງອຸດສາຫະກຳ ແລະ ການຄ້າ ປະກອບມີ ລັດຖະມົນຕີວ່າການ 01 ທ່ານ, ລັດຖະມົນຕີ ວ່າການ ມີໜ້າທີ່ຄຸ້ມຄອງ, ອຳນວຍຄວບຄຸມ ແລະ ນຳພາຈັດຕັ້ງປະຕິບັດ ແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ; ຮັບຜິດຊອບໂດຍກົງ ຕໍ່ ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການເຄື່ອນໄຫວວຽກງານ ໃນຂົງເຂດອຸດສາຫະກຳ ແລະ ການຄ້າ.

6.2 ກະຊວງອຸດສາຫະກຳ ແລະ ການຄ້າ ມີ ລັດຖະມົນຕີຊ່ວຍວ່າການ ຈຳນວນໜຶ່ງ, ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ແລະ ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງ ຕາມການມອບໝາຍ ຂອງລັດຖະມົນຕີວ່າການ.

6.3 ກະຊວງອຸດສາຫະກຳ ແລະ ການຄ້າ ມີ ຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າສະຖາບັນ; ຫົວໜ້າ, ຮອງຫົວໜ້າພະແນກຂອງກົມ, ສະຖາບັນ ແລະ ຫ້ອງການ; ພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ຈຳນວນໜຶ່ງ ຊຶ່ງບັນຈຸເຂົ້າໃນຕຳແໜ່ງງານຕ່າງໆຕາມຄວາມເໝາະສົມ.

6.4 ຢູ່ຂັ້ນທ້ອງຖິ່ນ ມີ ຫົວໜ້າ, ຮອງຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ; ຫົວໜ້າ, ຮອງຫົວໜ້າ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ (ຖ້າຈຳເປັນ)

ແລະ ພະ ນັກງານວິຊາການຈຳນວນໜຶ່ງ ທີ່ຂຶ້ນກັບການຊີ້ນຳ ແລະ ຄຸ້ມຄອງທາງດ້ານວິຊາການ ຈາກກະ ຊວງ ອຸດສາຫະກຳ ແລະ ການຄ້າ.

6.5 ຢູ່ຕ່າງປະເທດ ປະກອບມີ ທີ່ປຶກສາ ແລະ ເລຂາ ທີ່ປະຈຳຢູ່ ຫ້ອງການທີ່ປຶກສາເສດຖະກິດ ການຄ້າລາວ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

### ມາດຕາ 7. ຫຼັກການ ແລະ ວິທີການເຮັດວຽກ

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງປະຕິບັດຫຼັກການເຮັດວຽກຕ່າງໆ ດັ່ງຕໍ່ໄປນີ້:

- ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບ ລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບ ການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ.
- ທຸກການເຄື່ອນໄຫວ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະນັກງານວິຊາການ ທຸກຄົນ ແມ່ນອີງໃສ່ລະບຽບກົດໝາຍ ແລະ ລະບຽບຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນຕົວຈິງ.
- ເຄື່ອນໄຫວວຽກງານຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ.
- ທັນລົງຮາກຖານ, ປະສານສົມທົບຢ່າງແໜ້ນແຟ້ນກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແນໃສ່ໝູນໃຊ້ກຳລັງແຮງສັງລວມ ຂອງ ທຸກພາກສ່ວນເຂົ້າໃນການປະຕິບັດຫຼ້ອນໜ້າທີ່ຕ່າງໆ ທີ່ໄດ້ຮັບມອບໝາຍ.
- ທຸກການເຄື່ອນໄຫວ, ຂັ້ນຕອນຂອງວຽກງານຂອງຕົນຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາ-ປະເມີນຜົນ ແລະ ສາຍເຫດຂອງແຕ່ລະດ້ານຢ່າງຖືກຕ້ອງ, ແທດເໝາະກັບສະພາບຄວາມເປັນຈິງ ເພື່ອລາຍງານຂໍຄຳເຫັນ ຫຼື ທິດຊີ້ນຳຈາກລັດຖະບານຢ່າງເປັນປະຈຳ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 8. ກາປະທັບ ແລະ ງົບປະມານ

ກະຊວງ ອຸດສາຫະກຳ ແລະ ການຄ້າ; ຫ້ອງການ, ບັນດາກົມ, ສະຖາບັນ; ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ; ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ແລະ ບັນດາຫ້ອງການທີ່ປຶກສາເສດຖະກິດການຄ້າລາວ ທີ່ປະຈຳຢູ່ຕ່າງປະເທດມີກາປະທັບ ແລະ ງົບປະມານຂອງລັດມອບໃຫ້ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄົ້ນຄວ້າຜັນຂະຫຍາຍ ແລະ ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງ ຂອງ ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ, ບັນດາກົມ, ສະຖາບັນ ແລະ ອື່ນໆ ທີ່ກຳນົດຢູ່ ໃນມາດຕາ 5 ຂອງດຳລັດສະບັບນີ້, ບົນພື້ນຖານການປະກອບຄຳເຫັນ ຈາກອົງການຈັດຕັ້ງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 11.** ດຳລັດສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 33/ນຍ, ລົງວັນທີ 19 ເມສາ 1999 ແລະ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງການຄ້າ ສະບັບເລກທີ 06/ນຍ, ລົງວັນທີ 24 ມັງກອນ 2005.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

